# ບົດບັນທຶກກອງປະຊຸມ

## ການຮ່ວມມືພັດທະນາການຄ້າຊາຍແດນ ລາວ - ຫວຽດນາມ ຄັ້ງທີ VII ລະຫວ່າງ ກະຊວງ ອຸດສາຫະກໍາ ແລະ ການຄ້າ ສປປ ລາວ ແລະ ກະຊວງອຸດສາຫະກໍາ ແລະ ການຄ້າ ສສ ຫວຽດນາມ

---

ປະຕິບັດຕາມຂໍ້ຕົກລົງ ກອງປະຊຸມກ່ຽວກັບການຄຸ້ມຄອງ ຕະຫຼາດຊາຍແດນ ແລະ ການຄ້າຊາຍແດນ ລາວ - ຫວຽດນາມ ຄັ້ງທີ VI ທີ່ ແຂວງ ສະຫວັນນະເຂດ ສປປ ລາວ; ໂດຍໄດ້ຮັບການເຫັນດີ ຈາກລັດຖະບານ ທັງສອງປະເທດ ລາວ - ຫວຽດນາມ, ກອງປະຊຸມຄັ້ງທີ VII ກ່ຽວກັບການຮ່ວມມືພັດທະນາການຄ້າຊາຍແດນ ລາວ - ຫວຽດນາມ, ໄດ້ຈັດຂຶ້ນທີ່ ເມືອງເຊິມເຊີນ, ແຂວງ ແຫງຮົວ ສສ ຫວຽດນາມ ໃນລະຫວ່າງວັນທີ 08 -10/09/2010 ພາຍໃຕ້ການເປັນປະທານຮ່ວມ ລະຫວ່າງ ທ່ານ ນາງ ເຂັມມະນີ ພົນເສນາ, ລັດຖະມົນຕີຊ່ວຍວ່າການ ກະຊວງອຸດສາຫະກໍາ ແລະ ການຄ້າ ສປປ ລາວ ແລະ ທ່ານ ຫງວຽນ ເກີມ ຕູ້, ລັດຖະມົນຕີຊ່ວຍວ່າ ການກະຊວງອຸດສາຫະກໍາ ແລະ ການຄ້າ ສສ ຫວຽດນາມ (ຕໍ່ໄປນີ້ເອີ້ນວ່າສອງຝ່າຍ). ເຂົ້າຮ່ວມກອງປະຊຸມຄັ້ງນີ້ປະກອບມີ : ບັນດາກະຊວງ, ຂະແໜງການກ່ຽວຂ້ອງ, ພະແນກອຸດສາຫະກໍາ ແລະ ການຄ້າແຂວງ ທີ່ມີຊາຍແດນຕິດຈອດກັນ ແລະ ບາງຫົວໜ່ວຍທຸລະກິດ ຂອງ ສອງປະເທດ ( ລາຍຊື່ຄັດຕິດໃນສາລະບານ 01 ແລະ 02 ).

ທ່ານ ຫວຽນ ງອກ ໂຮຍ ຮອງປະທານຄະນະກໍາມະການປະຊາຊົນ ແຂວງແຫງຮົວ ໄດ້ເຂົ້າຮ່ວມກອງປະຊຸມ ແລະ ກ່າວຕ້ອນຮັບກອງປະຊຸມ.

ກອງປະຊຸມໄດ້ດໍາເນີນໄປ ໃນທາມກາງບັນຍາກາດ ໄມຕີຈິດມິດຕະພາບ ແລະ ຄວາມສາມັກຄີແບບພິເສດ ລາວ-ຫວຽດນາມ. ສອງຝ່າຍໄດ້ແລກປ່ຽນ ແລະ ຕີລາຄາຄືນ ການຮ່ວມມືຈັດຕັ້ງປະຕິບັດເນື້ອໃນຂອງກອງປະຊຸມ ຕະຫຼາດຊາຍແດນ ແລະ ການຄ້າຊາຍແດນ ລາວ - ຫວຽດນາມ ຄັ້ງທີ VI ໃນໄລຍະ 2 ປີ ທີ່ຜ່ານມາ.

ກອງປະຊຸມຄັ້ງນີ້ໄດ້ເໜັ້ນເຖິງຄວາມສໍາຄັນ ຂອງ ວຽກງານການພັດທະນາຊາຍແດນ ຂອງ ສອງປະເທດ ເຊິ່ງ ແມ່ນກົນໄກໜຶ່ງ ຂອງ ການຮ່ວມມືທີ່ຈໍາເປັນ ໃນການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການເສີມຂະຫຍາຍ, ເພີ່ມທະວີສາຍພົວພັນ ຢ່າງຮອບດ້ານຂອງສອງຊາດ ລາວ - ຫວຽດນາມ.

ບົນພື້ນຖານເນື້ອໃນຈິດໃຈດັ່ງກ່າວ, ສອງຝ່າຍໄດ້ແລກປ່ຽນ ແລະ ຮັບຊາບໂດຍເປັນເອກະພາບໃນການຈັດຕັ້ງປະຕິບັດດັ່ງນີ້:

### 1. <u>ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງ ຕະຫຼາດຊາຍແດນ ແລະ ການຄ້າຊາຍແດນ</u>

ກອງປະຊຸມໄດ້ຕີລາຄາສູງຕໍ່ ໝາກຜົນທີ່ຍາດມາໄດ້ ໃນການຈັດຕັ້ງປະຕິບັດ ເນື້ອໃນບົດບັນທຶກກອງປະຊຸມການຄຸ້ມຄອງ ຕະຫຼາດຊາຍແດນ ແລະ ການຄ້າຊາຍແດນ ລາວ - ຫວຽດນາມ ຄັ້ງທີ VI ເຖິງ

ປະຈຸບັນ, ເຊິ່ງໄດ້ປະກອບສ່ວນໃນການເພີ່ມທະວີການພົວພັນເສດຖະກິດ - ການຄ້າ ລະຫວ່າງ ສອງປະເທດ ໂດຍສະເພາະແມ່ນໄດ້ປະກອບສ່ວນ ເຂົ້າໃນການແລກປ່ຽນສິນຄ້າ ຜ່ານດ່ານຊາຍແດນສອງປະເທດ.

ສອງຝ່າຍໄດ້ເອົາໃຈໃສ່ຢ່າງຕັ້ງໜ້າ ເພື່ອຈັດຕັ້ງປະຕິບັດ ໂຄງການພັດທະນາການຄ້າ ລາວ - ຫວຽດນາມ ໃນໄລຍະ 2008 - 2015 ແນໃສ່ໃຫ້ບັນລຸຄາດໝາຍມູນຄ່າການຄ້າ 1 ຕື້ໂດລາສະຫະລັດ ໃນປີ 2010 ແລະ 02 ຕື້ໂດລາສະຫະລັດ ໃນປີ 2015. ເຖິງແມ່ວ່າຈະໄດ້ຮັບຜົນສະທ້ອນຈາກອຸປະສັກທາງດ້ານວິກິດການຂອງໂລກ, ສອງຝ່າຍຍັງສາມາດຮັກສາລະດັບການຂະຫຍາຍຕົວທາງດ້ານການຄ້າ.

ສອງຝ່າຍໄດ້ສືບຕໍ່ຕິກລົງການໃຫ້ບູລິມະສິດການຫຼຸດຜ່ອນອັດຕາພາສີ 50% ແລະ 0% ແລະ ທັງໄດ້ເພີ່ມບາງລາຍການສິນຄ້ານຳເຂົ້າ.

## 2. <u>ບາງບັນຫາ ທີ່ຍັງຄົງຄ້າງ</u>.

ເຖິງວ່າສອງຝ່າຍ ຈະສາມາດປະຕິບັດເນື້ອໃນບົດບັນທຶກກອງປະຊຸມຕະຫຼາດຊາຍແດນ ແລະ ການຄ້າຊາຍແດນໄດ້ດີ, ແຕ່ຍັງມີບາງບັນຫາ ທີ່ບໍ່ທັນສາມາດປະຕິບັດ ໃຫ້ບັນລຸເປົ້າໝາຍ ທີ່ສອງລັດຖະບານກຳນົດເຊັ່ນ:

- ການຈັດຕັ້ງປະຕິບັດ ນິຕິກຳໃນການສ້າງເງື່ອນໄຂ ອຳນວຍຄວາມສະດວກ ໃຫ້ແກ່ຄົນ, ພາຫະນະ, ສິນຄ້າ ຜ່ານດ່ານຊາຍແດນ ຂອງ ສອງປະເທດ ຍັງບໍ່ສາມາດປະຕິບັດໄດ້ດີ ເທົ່າທີ່ຄວນ.

- ການຜັນຂະຫຍາຍເນື້ອໃນບົດບັນທຶກ ກອງປະຊຸມຄຸ້ມຄອງຕະຫຼາດຊາຍແດນ ແລະ ການຄ້າຊາຍແດນ ຄັ້ງທີ VI ໂດຍສະເພາະ ການສ້າງແຜນແມ່ບົດພັດທະນາຕາໜ່າງຕະຫຼາດຊາຍແດນ ຍັງບໍ່ສາມາດສຳເລັດຕາມກຳນົດເວລາ.

- ການເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບນິຕິກຳ ແລະ ນະໂຍບາຍການຄ້າ ໃຫ້ອຳນາດການປົກຄອງທ້ອງຖິ່ນ ແລະ ຫົວໜ່ວຍທຸລະກິດ ຂອງ ສອງຝ່າຍ ຍັງບໍ່ສາມາດປະຕິບັດ ໄດ້ດີເທົ່າທີ່ຄວນ.

## 3. <u>ການຮ່ວມມືພັດທະນາການຄ້າຊາຍແດນ</u>.

- ສອງຝ່າຍຈະສືບຕໍ່ ຮ່ວມມືກັນໃນການສ້າງແຜນແມ່ບົດພັດທະນາຕາໜ່າງຕະຫຼາດຊາຍແດນ ລາວ - ຫວຽດນາມ ຮອດປີ 2020 ໃຫ້ສຳເລັດ ເພື່ອນຳສະເໜີລັດຖະບານ ສອງປະເທດ ກ່ອນເດືອນ 6 ປີ 2011.

- ສອງຝ່າຍຈະສົມທົບຮ່ວມມືກັນ ໃນການຄົ້ນຄວ້າການສ້າງແຜນແມ່ບົດ ພັດທະນາການຄ້າຊາຍແດນ ຮອດປີ 2020.

- ສອງຝ່າຍຈະສືບຕໍ່ຮ່ວມມືກັນ ປະສານສົມທົບກັບຂະແໜງການກ່ຽວຂ້ອງ ສ້າງນິຕິກຳ ກ່ຽວກັບການຄຸ້ມຄອງຕະຫຼາດຊາຍແດນ ພາຍຫຼັງແຜນແມ່ບົດໄດ້ຖືກຮັບຮອງຈາກສອງລັດຖະບານ.

- ສອງຝ່າຍຈະປະສານ ສົມທົບກັບຂະແໜງການກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນ ໃນການລົງ ສຳຫຼວດ ແລະ ຕີລາຄາ ແຜນການຍົກລະດັບ ຕະຫຼາດຫ້ວຍດິນດຳ ເມືອງໜອງແຮດ ແຂວງຊຽງຂວາງ ເພື່ອນຳສະເໜີລັດຖະບານສອງປະເທດ.

- ສອງຝ່າຍຈະສືບຕໍ່ປະສານກັບຂະແໜງການກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນ ຄົ້ນຄວ້າວິທີການໃນການພັດທະນາ ບັນດາເຂດເສດຖະກິດ ແລະ ເຂດການຄ້າຊາຍແດນເຊັ່ນ: ແດນສະຫວັນ (ສະຫວັນ ນະເຂດ) - ລາວບາວ (ກວາງຈິ), ປາງຫົກ (ຜົ້ງສາລີ) - ໄຕຈາງ (ດຽນບຽນ), ພູເກືອ (ອັດຕະປື) - ເບີອີ (ໂກນຕູມ) ທີ່ ໄດ້ຕົກລົງຢູ່ໃນສັນຍາ ຂອງ ລັດຖະບານສອງປະເທດ.

- ເພື່ອບັນລຸເປົ້າໝາຍ ຂອງ ສອງ ລັດຖະບານໄດ້ກຳນົດມູນຄ່າການຄ້າ, ສອງຝ່າຍຈະຄົ້ນຄ້ວາ ແລະ ຊອກຫາວິທີ ແລະ ມາດຕະການອັນເໝາະສົມເພື່ອແນ່ໃສ່ເຮັດໃຫ້ມູນຄ່າການຄ້າສອງປະເທດ ເພີ່ມ ຂຶ້ນ.

## 4. ການຂົນຂວາຍການລົງທຶນຈາກສາກົນ.

ສອງຝ່າຍໄດ້ເປັນເອກະພາບກັນ ສ້າງແຜນການຮ່ວມມືເຄື່ອນໄຫວດຶງດູດການລົງທຶນຈາກສາກົນ ໃນການພັດທະນາການຄ້າຊາຍແດນ ເພື່ອແນໃສ່ລົບລ້າງຄວາມທຸກຍາກ ໃນຂົງເຂດຊາຍແດນຂອງສອງ ປະເທດ

## 5. ກົນໄກການຮ່ວມມື.

ສອງຝ່າຍເປັນເອກະພາບກັນມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ ແລະ ກົມການຄ້າພູດອຍ ກະຊວງອຸດສາຫະກຳ ແລະ ການຄ້າ ສສ ຫວຽດນາມ ເປັນ ຈຸດປະສານງານ ເພື່ອສົມທົບກັບຂະແໜງການກ່ຽວຂ້ອງປະຕິບັດດັ່ງນີ້:

- ຕິດຕາມຈັດຕັ້ງປະຕິບັດ ຄຸ້ມຄອງຕະຫຼາດຊາຍແດນ ແລະ ການຄ້າຊາຍແດນ ແລະ ບັນດາ ຂໍ້ຕົກລົງ ການຈັດຕັ້ງປະຕິບັດການໃຫ້ບູລິມະສິດຫຼຸດຜ່ອນອັດຕາພາພາສີ ລາວ - ຫວຽດນາມ

- ເພີ່ມທະວີການຮ່ວມມືການສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ຄົນ, ສິນຄ້າ ແລະ ພາຫະ ນະຜ່ານດ່ານຊາຍແດນ ຂອງ ສອງປະເທດ.

- ເພີ້ມທະວີການແລກປ່ຽນຂໍ້ມູນຂ່າວສານ, ຖອດຖອນ ບົດຮຽນໃນການຄຸ້ມຄອງການຄ້າຊາຍແດນ ໃຫ້ຂະແໜງການກ່ຽວຂ້ອງ ທ້ອງຖິ່ນ ຮັບຊາບ ໂດຍຜ່ານຮູບການຈັດສຳມະນາ, ເຜີຍແຜ່ນິຕິກຳ ແລະ ນະໂຍ ບາຍການຄ້າ ໃຫ້ແກ່ເຈົ້າໜ້າທີ່ ຂອງລັດ ແລະ ນັກທຸລະກິດ ຢູ່ບັນດາແຂວງທີ່ມີຊາຍແດນ ຕິດຈອດກັນ ຂອງ ສອງປະເທດໄດ້ຮັບຮູ້ ຢ່າງກວ້າງຂວາງ

## 6. ການຈັດກອງປະຊຸມ ຄັ້ງທີ VIII.

ສອງຝ່າຍຕົກລົງກັນ ຈະຈັດກອງປະຊຸມ ການຮ່ວມມືພັດທະນາການຄ້າຊາຍແດນ ລາວ - ຫວຽດ ນາມ ຄັ້ງທີ VIII ໃນປີ 2012 ຢູ່ທີ່ ສປປ ລາວ. ສ່ວນວັນເວລາ ແລະ ສະຖານທີ່ລະອຽດຈະແຈ້ງໃຫ້ຊາບ ຕາມພາຍຫລັງ.

ຄະນະຜູ້ແທນ ກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ ໄດ້ສະແດງຄວາມ ຂອບໃຈຢ່າງ ເລິກເຊິ່ງຕໍ່ ຄະນະນຳກະຊວງອຸດສາຫະກຳ ແລະ ການຄ້າ ສສ ຫວຽດນຽມ ແລະ ຄະນະນຳ ຂອງ ແຂວງ

ແທງຫິວ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ເຕັມໄປດ້ວຍໄມຕີຈິດມິດຕະພາບ ແລະ ຄວາມສາມັກຄີ ແບບພິເສດ ລາວ - ຫວຽດນາມ.

ບົດບັນທຶກສະບັບນີ້ ໄດ້ເຮັດຂຶ້ນທີ່ເມືອງເຊິມເຊີນ, ແຂວງ ແທງຮິວ, ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ໃນວັນທີ 09/09/2010 ເປັນສອງສະບັບຕົ້ນ ພາສາລາວ ແລະ ພາສາຫວຽດນາມ, ແຕ່ລະຝ່າຍຮັກສາໄວ້ໜຶ່ງສະບັບເປັນພາລາວ ແລະ ໜຶ່ງສະບັບເປັນພາສາຫວຽດ. ແຕ່ລະສະບັບລ້ວນແລ້ວແຕ່ມີຄຸນຄ່າເທົ່າທຽມກັນ.

| ລັດຖະມົນຕີຊ່ວຍວ່າການ<br>ກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ | ລັດຖະມົນຕີຊ່ວຍວ່າການ<br>ກະຊວງອຸດສາຫະກຳ ແລະ ການຄ້າ ສສ ຫວຽດນາມ |
|---|---|
| ເຂັມມະນີ ພົນເສນາ | ຫາງວຽນ ເກີມ ຕູ້ |